ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ : 04/ມຕ.ທຄຕລ

ນະຄອນຫຼວງວຽງຈັນ, ວັນທີ: 27/03/2020

ມະຕິ

ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝມສາມັນ

ຄັ້ງທີ 2 ປະຈຳປີ 2020, ວັນທີ 26/03/2020

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝມສາມັນ ຄັ້ງທີ 2 ປະຈຳປີ 2020 ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ຂອງວັນທີ 26/03/2020 ທີ່ສຳນັກງານໃຫຍ່ ທຄຕລ ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີກຳມະການສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

ກອງປະຊຸມໄດ້ປຶກສາຫາລື ແລະ ມີມະຕິກລົງ ດັ່ງນີ້:

1. ຮັບຮອງຜົນການກວດສອບເອກະສານລາຍງານການເງິນ ທຄຕລ ປະຈຳປີ 2019 (ມາດຕະຖານລາວ) ຈາກຜູ້ກວດສອບອິດສະຫຼະ ບໍລິສັດເອິນສ໌ແອນຢັ່ງລາວ ຈຳກັດ ແລະ ເຫັນດີຮັບຮອງວິທີການເພື່ອຮັບຮອງຜົນການກວດສອບເອກະສານລາຍງານການເງິນປະຈຳປີ 2019 ມາດຕະຖານສາກົນ (IFRS) ຜ່ານທາງຈົດໝາຍວຽນຫຼັງການກວດສອບສຳເລັດ, ເພື່ອນຳສະເໜີກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ຮັບຮອງ;
2. ຮັບຮອງການປັບປຸງບາງຕົວເລກແຜນການທຸລະກິດ ປະຈຳປີ 2020 ຂອງ ທຄຕລ ເພື່ອເປັນບ່ອນອີງໃນການນຳສະເໜີກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ຮັບຮອງ;
3. ຮັບຮອງຜົນການປະເມີນຊ່ອງຫວ່າງ ແລະ ແຜນການປັບປຸງໂຄງສ້າງການຄຸ້ມຄອງບໍລິຫານຄວາມສ່ຽງຂອງ ທຄຕລ;
4. ຮັບຮອງການສ້າງຕັ້ງພະແນກຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ຜູ້ກໍ່ການຮ້າຍ (AML) ຂອງ ທຄຕລ;
5. ຮັບຮອງຮ່າງວາລະກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ 2019 ມີຫົວຂໍ້ສຳຄັນດັ່ງນີ້:
    1) ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018 ແລະ ລາຍງານການຈັດຕັ້ງປະຕິບັດມະຕິຂອງກອງປະຊຸມ;
    2) ລາຍງານໂດຍຫຍໍ້ ກ່ຽວກັບ ສະພາບການດຳເນີນງານຂອງ ທຄຕລ ໃນປີ 2019;
    3) ພິຈາລະນາ ແລະ ຮັບຮອງເອົາຜົນການດຳເນີນທຸລະກິດປະຈຳປີ 2019;
    4) ພິຈາລະນາ ແລະ ຮັບຮອງເງິນປັນຜົນປະຈຳປີ 2019;
    5) ພິຈາລະນາ ແລະ ຮັບຮອງເອົາແຜນການປີ 2020;
    6) ພິຈາລະນາ ແລະ ຮັບຮອງເອົາຜູ້ກວດສອບອິດສະຫຼະ ປະຈຳປີ 2020;
    7) ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະພາບໍລິຫານຊຸດໃໝ່.

6. ຮັບຮອງບັນຫາທີ່ຕິດພັນກັບການຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ຄື:

ອີງຕາມແຈ້ງການຂອງຄະນະສະເພາະກິດຂອງລັດຖະບານ ກ່ຽວກັບ ການປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດ ຂອງພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ແລະ ແຈ້ງການຂອງຄະນະກຳມະການຄຸ້ມ ຄອງຫຼັກຊັບ (ສຄຄຊ) ຖ້າຫາກ ທຄຕລ ເຫັນວ່າອາດຈະບໍ່ມີຄວາມພ້ອມຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2019 ຕາມ ກຳນົດເດີມທີ່ໄດ້ແຈ້ງໄປກ່ອນໜ້ານີ້ ກໍໃຫ້ຄະນະອຳນວຍການ ທຄຕລ ສະເໜີຕໍ່ ສຄຄຊ ແລະ ພາກສ່ວນກ່ຽວຂ້ອງ ເພື່ອເລື່ອນກອງປະຊຸມດັ່ງກ່າວ ຕາມຄວາມເໝາະສົມ ຫຼັງຈາກນັ້ນໃຫ້ແຈ້ງຜູ້ຖືຮຸ້ນຮັບຊາບດ້ວຍ.

ປະທານສະພາບໍລິຫານ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ບຸນເຫຼືອ ສົມໄຊວໍຣະວົງ